**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

=====00000=====

ແຂວງເຊກອງ:

ຫ້ອງວ່າການແຂວງ

ເລກທີ.36../ຫວຂ.ຊກ

ລົງວັນທີ..13..3...2020..

## ແຈ້ງການ

**ເຖິງ:** ບັນດາພະແນກການ, ອົງການທຽບເທົ່າ, ສອງກຳລັງປະກອບອາວຸດ, ບັນດາເມືອງ, ບັນດາດ່ານ, ລັດວິສາຫະກິດ, ນັກທຸລະກິດ, ຜູ້ປະກອບການພາຍໃນ ແລະ ຕ່າງປະເທດຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າທົ່ວແຂວງເຊກອງ.

**ເລື່ອງ:** ແຈ້ງປິດດ່ານທ້ອງຖິ່ນ ແລະ ດ່ານປະເພນີຊົ່ວຄາວລະຫວ່າງແຂວງເຊກອງ ສ ປປ ລາວ ກັບ ບັນດາແຂວງ ຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັບແຂວງເຊກອງ.

- ອີງຕາມ ພາລະບົດບາດສິດ ແລະ ໜ້າທີ່ຂອງຫ້ອງວ່າການແຂວງ ເລກທີ 98/ຈຂ.ຊກ, ລົງວັນທີ 6 ທັນວາ 2018.
- ອີງຕາມ ບົດບັນທຶກກອງປະຊຸມຄະນະປະຈຳພັກແຂວງ ສະບັບເລກທີ 02/ຫວຂ.ຊກ, ລົງວັນທີ 3 ມີນາ 2020.
- ອີງຕາມ ການເຫັນດີເປັນເອກະພາບໃນກອງປະຊຸມຮ່ວມຫ້ອງວ່າການແຂວງ, ພະແນກການກ່ຽວຂ້ອງລົງວັນທີ 12/3/2020.

ເພື່ອເຮັດໃຫ້ການປ້ອງກັນ ແລະ ຄວບຄຸມການລະບາດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ໂກວິດ 2019, ເຊິ່ງປະຈຸບັນກໍມີການລະບາດໃນວົງກ້ວາງ ໃນບັນດາປະເທດຕ່າງໆ ເຊິ່ງມີຜົນກະທົບຕໍ່ສຸຂະພາບ ແລະ ມີຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ. ສະນັ້ນ, ການປ້ອງກັນ, ການຄວບຄຸມເຊື້ອພະຍາດດັ່ງກ່າວເປັນຄວາມຈຳເປັນຢ່າງຮີບດ່ວນເພື່ອຮັບປະກັນຄວາມປອດໄພຕໍ່ສຸຂະພາບ ແລະ ຊີວິດຂອງປະຊາຊົນ.

**ຫົວໜ້າຫ້ອງວ່າການແຂວງ-ແຂວງເຊກອງອອກແຈ້ງການດັ່ງນີ້:**

1. ປິດການບໍລິການຊົ່ວຄາວບັນດາດ່ານເຂົ້າ-ອອກ ລະຫວ່າງແຂວງເຊກອງບັນດາແຂວງຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັບແຂວງເຊກອງລະອຽດຄືດັ່ງລຸ່ມນີ້:
   - ດ່ານດາກຕະອອກ.
   - ດ່ານດາກປາຣ.
   - ດ່ານຕະວາງ.
   - ດ່ານກະໂຽ.

ສ່ວນຈຸດຂ້າມລອຍທີ່ບໍ່ແມ່ນດ່ານປະເພນີ, ແຕ່ມີປະຊົນຂ້າມຜ່ານທຳມາຫາກິນ ມອບໃຫ້ເຈົ້າໜ້າທີ່ ແລະ ເມືອງ, ອຳນາດການປົກຄອງບ້ານເປັນເຈົ້າການຕິດຕາມ, ຈຳກັດຢ່າງເຂັ້ມງວດ.

Scanned with CamScanner

2. ມອບໃຫ້ເຈົ້າໜ້າທີ່ປະຈຳດ່ານແຕ່ລະຈຸດແຈ້ງ, ປະສານກັບເຈົ້າໜ້າທີ່ຝ່າຍ ຫວຽດນາມ ເພື່ອຮ່ວມື ແລະ ປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

3. ມອບໃຫ້ພະແນກສາທາລະນະສຸກ ແລະ ກອງເລຂາຂອງຄະນະກຳມະການຄວບຄຸມພະຍາດເຊື້ອຈຸລະໂລກສາຍພັນໃໝ່(covid2019)ຄົ້ນຄວ້າ ແລະ ກຳນົດສະຖານທີ່ ເພື່ອກວດກາຄວບຄຸມຄົນທີ່ເດີນທາງມາຈາກປະເທດທີ່ມີຄວາມສ່ຽງ.

4. ໃຫ້ບັນດາເມືອງ, ບ້ານທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ ສສ ຫວຽດນາມເປັນເຈົ້າໃນການຕິດຕາມກວດກາ, ເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຮັບຊາບ ພ້ອມທັງຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ມີປະສິດທິຜົນ.

5. ບັນດາພະແນກການ, ອົງການທຽບເທົ່າ, ສອງກຳລັງປະກອບອາວຸດ, ບັນດາເມືອງ, ລັດວິສາຫະກິດ, ນັກທຸລະກິດ, ຜູ້ປະກອບການພາຍໃນ ແລະ ຕ່າງປະເທດຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າທົ່ວແຂວງເຊກອງໃຫ້ຮັບຊາບເຂົ້າໃຈທົ່ວເຖິງກັນ.

6. ມອບໃຫ້ພະແນກການຕ່າງປະເທດແຈ້ງໃຫ້ບັນດາແຂວງຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັບແຂວງເຊກອງຮັບຊາບ ແລະ ເຂົ້າໃຈເຖິງຄວາມຈຳເປັນໃນການປິດດ່ານຊົ່ວຄາວໃນຄັ້ງນີ້.

ດັ່ງນັ້ນ, ຫ້ອງວ່າການແຂວງເຊກອງ ຈຶ່ງອອກແຈ້ງການສະບັບນີ້ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກວ່າຈະມີແຈ້ງການປ່ຽນແປງ.

ຫົວໜ້າຫ້ອງວ່າການແຂວງ

ແຂວງເຊກອງ
ຫ້ອງວ່າການ

ປອ ແພງສີ ສີລາວົ

**ບ່ອນນຳສົ່ງ:**

-ພະແນກການອ້ອມຂ້າງອົງການທຽບເທົ່າ,
ສອງກຳລັງປະກອບອາວຸດ,
ບັນດາເມືອງ,ລັດວິສະຫະກິດ. ບ່ອນລະ 01 ສະບັບ
-ຫ້ອງວ່າການແຂວງ 01 ສະບັບ
-ສຳເນົາ 02 ສະບັບ

Scanned with CamScanner